ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ　　　　　　　　ເລກທີ 1197/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 31 DEC 2019

# ຂໍ້ຕົກລົງ

# ວ່າດ້ວຍວົງເງິນປົກປ້ອງ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ດຳລັດວ່າດ້ວຍການປົກປ້ອງເງິນຝາກ ສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017;
- ອີງຕາມ ການສະເໜີຂອງສຳນັກງານປົກປ້ອງເງິນຝາກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອຜັນຂະຫຍາຍ ມາດຕາ 11 ຂອງ ດຳລັດວ່າດ້ວຍການປົກປ້ອງເງິນຝາກ ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ແລະ ສາມາດຈັດຕັ້ງປະຕິບັດຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ສ້າງຄວາມເຊື່ອໝັ້ນໃຫ້ສັງຄົມຕໍ່ລະບົບສະຖາບັນການເງິນ ຢູ່ ສປປ ລາວ.

**ມາດຕາ 2 ວົງເງິນປົກປ້ອງ**

ວົງເງິນປົກປ້ອງ ແມ່ນວົງເງິນສູງສຸດ ຈຳນວນຫ້າສິບລ້ານ (50.000.000) ກີບ ຕໍ່ ຜູ້ຝາກເງິນໜຶ່ງລາຍ ຕໍ່ ສະມາຊິກໜຶ່ງແຫ່ງ.

ເງິນຝາກທີ່ໄດ້ຮັບການປົກປ້ອງ ເປັນສະກຸນເງິນຕາຕ່າງປະເທດ ໃຫ້ປະຕິບັດອັດຕາແລກປ່ຽນ (ອັດຕາຊື້) ທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນວັນສຸດທ້າຍຂອງການດຳເນີນທຸລະກິດ ຂອງສະມາຊິກ ທີ່ຢູ່ໃນສະພາວະລົ້ມລະລາຍ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ສຳນັກງານປົກປ້ອງເງິນຝາກ, ສະມາຊິກຂອງສຳນັກງານປົກປ້ອງເງິນຝາກ, ຜູ້ຝາກເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ສອນໄຊ ສິດພະໄຊ